**ບົດຄຳເຫັນ ຂອງ ພະນະທ່ານ ພັນຄຳ ວິພາວັນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

**ໃນກອງປະຊຸມສຸດຍອດ ໂຄວິດ - 19**

**ພາຍໃຕ້ຫົວຂໍ້ : ການຢຸດຕິພະຍາດ ໂຄວິດ-19 ແລະ ຟື້ນຟູຄືນໃໝ່ທີ່ດີກວ່າ**

**ວັນທີ 22 ກັນຍາ 2021**

- ບັນດາທ່ານ,
- ທ່ານ ຍິງ ແລະ ທ່ານຊາຍ ທີ່ຮັກແພງ,

ເກືອບ 2 ປີແລ້ວ ທີ່ ໂລກຂອງພວກເຮົາ ໄດ້ປະເຊີນໜ້າ ກັບ ການລະບາດຂອງພະຍາດໂຄວິດ 19 ທີ່ໄດ້ສ້າງຜົນກະທົບຢ່າງຫລວງຫລາຍ ຕໍ່ ການພັດທະນາ ເສດຖະກິດ-ສັງຄົມ ກໍຄື ການດຳລົງຊີວິດຂອງປະຊາຊົນໃນທົ່ວໂລກ. ມາເຖິງປັດຈຸບັນນີ້, ຕົວເລກຜູ່ຕິດເຊື້ອ ແລະ ເສຍຊີວິດຈາກພະຍາດດັ່ງກ່າວ ຍັງສືບຕໍ່ມີອັດຕາສູງໃນທຸກພາກພື້ນຂອງໂລກ. ສະນັ້ນ, ເພື່ອຕ້ານ ແລະ ເອົາຊະນະພະຍາດດັ່ງກ່າວນີ້, ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ໃຫ້ວົງຄະນາຍາດສາກົນ ຕ້ອງໄດ້ຮ່ວມມືກັນຢ່າງໃກ້ຊິດ ແລະ ຈິງໃຈ ແນໃສ່ເຮັດແນວໃດໃຫ້ອັດຕາຜູ່ຕິດເຊື້ອ ແລະ ເສຍຊີວິດຈາກພະຍາດດັ່ງກ່າວຫລຸດລົງໃນຂອບເຂດທົ່ວໂລກ.

ຂ້າພະເຈົ້າ ເຫັນວ່າ ປັດໃຈທີ່ສຳຄັນຕົ້ນຕໍ ທີ່ຈະຊ່ວຍຢັບຢັ້ງ ແລະ ຫລຸດຜ່ອນການຕິດເຊື້ອ ແລະ ເສຍຊີວິດຫລຸດລົງໄດ້ນັ້ນ ແມ່ນການຮັບປະກັນໃຫ້ທຸກຄົນໄດ້ເຂົ້າເຖິງວັກແຊ້ງຢ່າງສະເໜີພາບກັນ ແລະ ທັນການ ເພື່ອສ້າງພູມຄຸມກັນແບບຊຸມຊົນໃຫ້ທົ່ວເຖິງ. ດ້ວຍເຫດຜົນດັ່ງກ່າວ, ສປປ ລາວ ຈຶ່ງຮຽກຮ້ອງ ມາຍັງວົງຄະນາຍາດສາກົນ, ໂດຍສະເພາະ ບັນດາປະເທດ ພັດທະນາແລ້ວ ສືບຕໍ່ໃຫ້ການຊ່ວຍເຫລືອໃນການສະໜອງ ວັກແຊ້ງ ໃຫ້ແກ່ບັນດາປະເທດຕ່າງໆໃນໂລກ ຢ່າງທົ່ວເຖິງ ໂດຍສະເພາະ ປະເທດກຳລັງພັດທະນາ ແລະ ດ້ອຍພັດທະນາ ເພື່ອພ້ອມກັນເອົາຊະນະ ພະຍາດໂຄວິດ-19.

ສຳລັບ ສປປ ລາວ ພວກຂ້າພະເຈົ້າແມ່ນມີເປົ້າໝາຍ ທີ່ຈະສັກວັກແຊ້ງ ຢ່າງໜ້ອຍ ໃຫ້ໄດ້ 50% ຂອງປະຊາກອນທັງໝົດ ໃນທ້າຍປີ 2021 ແລະ ຈະສືບຕໍ່ສູ້ຊົນ ໃຫ້ໄດ້ຫຼາຍກວ່າ 80% ພາຍໃນປີ 2022. ໂອກາດນີ້, ຂ້າພະເຈົ້າ ຂໍສະແດງຄວາມໃຈຕໍ່ ບັນດາປະເທດເພື່ອນມິດ ກໍຄື ບັນດາອົງການຈັດຕັ້ງສາກົນ ທີ່ໄດ້ໃຫ້ການຊ່ວຍເຫລືອແກ່ ສປປ ລາວ ໄລຍະຜ່ານມາ ແລະ ຫວັງຢ່າງຍິ່ງວ່າ ຈະສືບຕໍ່ໃຫ້ການຊ່ວຍເຫລືອພວກຂ້າພະເຈົ້າຕື່ມອີກ.

ຂໍຂອບໃຈ

*"Unofficial translation"*

Remark by
H.E. Mr. Phankham VIPHAVANH
Prime Minister of the Lao People's Democratic Republic

At the Global Covid-19 Summit:
Ending the Pandemic and Build Back Better
22 September 2021

- Excellences,
- Ladies and Gentlemen,

It has been almost 2 years that we are faced with the COVID-19 pandemic, which has posed enormous impact on the Socio-Economic development as well as to the people's livelihood around the world. Currently, the number of infected and dead from the disease remains high in all regions of the world. Therefore, to prevent and overcome the impact of COVID-19, it requires genuine and close cooperation by the international community to reduce the scale of infections and deaths from this virus across the world.

I am of the view that the crucial factor that would help us contain and reduce the infection and death from COVID-19 is to ensure equal and immediate access to vaccine so we can create herd immunity. In this connection, the Lao PDR calls upon the international community, particularly the advanced countries to further assist in providing vaccines to all countries across the world, especially the least developed and developing countries so we can defeat the COVID-19 for good.

As for the Lao PDR, we have set a target to reach 50 percent inoculation of our population by the end of 2021 and will continue to strive to vaccine more 80 percent of our population by 2022. Taking this opportunity, I would like to express my sincere thanks to all friendly countries and the international organizations for providing assistance to the Lao PDR and I sincerely hope that we would continue to receive such supports in the future.

Thank you